ຕລອດໄປ. ແຕ່ວ່າໂຣກຕຸ່ມເປື່ອຍເຣີປີສ ສາມາດຮັກສາໄດ້ດ້ວຍຢາຊຶ່ງຈະຊ່ວຍລົດຜ່ອນບໍ່ໃຫ້ເກີດຂຶ້ນເລື້ອຍແລະຊ່ວຍບັນເທົາອາການບໍ່ໃຫ້ຮ້າຍແຮງ.

<u>ຈະໄປຮັບກວດແລະຮັກສາໂຣກນີ້ຢ່າງເປັນຄວາມລັບໄດ້ຢູ່ໃສ</u> ໃຫ້ໄປທີ່ສູນສຸຂພາບທາງເພດ. ຄລີນິກດັ່ງກ່າວຮັກສາໃຫ້ຟຣີແລະບໍ່ຈຳເປັນຕ້ອງບອກຊື່ຫຼືໃຊ້ບັດເມດີແຄ. ມີສູນສຸຂພາບທາງເພດຫຼາຍແຫ່ງຕາມໂຮງໝໍບາງແຫ່ງ ເຊັ່ນ ໂຮງໝໍSydney , Macquarie Street, Sydney, ໂທຣ: (02) 382 7440. ຊົ່ວໂມງເຮັດວຽກ ເລີ້ມຈາກ 8.30 ໂມງເຊົ້າ ເຖິງ 7.00 ໂມງແລງ ວັນຈັນ, ວັນຄານ, ວັນພະຫັດ, ວັນສຸກ; 2.30 ໂມງບ່າຍ ເຖິງ 7.00 ໂມງແລງ ວັນພຸດ. ນອກຈາກນີ້ ຍັງມີສູນສຸຂພາບທາງເພດທີ່ໂຮງໝໍ Liverpool, (02) 827 8022; ໂຮງໝໍ Parramatta (02) 635 6851; ໂຮງໝໍ St George (02) 3502742; Livingstone Raod Clinic, Marrickville (02) 560 3057; Gosford (Holden Street Centre (043) 202 114); ໂຮງໝໍ Port Kembla (042) 762 399. ມີຜູ້ແປພາສາໄວ້ໃຫ້ ຖ້າທ່ານຕ້ອງການ - ໃຫ້ຂໍເອົາຜູ້ແປພາສາຕອນເຮັດນັດພົບ. ມີຣາຍລະອຽດກ່ຽວກັບເຣື່ອງຕຸ່ມເປື່ອຍເຣີປີສທີ່ອະວັຍວະເພດທີ່ຂຽນໄວ້ເປັນພາສາອັງກິດຕາມສູນສຸຂພາບທາງເພດຕ່າງໆ.

**NSW Multicultural Health Communication Service**
website: www.http://mhcs.health.nsw.gov.au
e-mail: mhcs@doh.health.nsw.gov.au
phone: (02) 9382 8111

multicultural communication

Laotian
29 January 1996

# What you should know about Herpes

# ສິ່ງທີ່ຄວນຮູ້ ກ່ຽວກັບໂຣກຕຸ່ມເປື່ອຍເຣີປີສ

NSW HEALTH
FOR A STATE OF BETTER HEALTH

# What you should know about Herpes

# ສິ່ງທີ່ຄວນຮູ້ກ່ຽວກັບໂຣກຕຸ່ມເປື່ອຍເຮີປີສ

ມີເຫດຜົນທີ່ດີຫຼາຍຢ່າງວ່າເປັນຫຍັງທຸກຄົນຄວນຮູ້ກ່ຽວກັບໂຣກຕຸ່ມເປື່ອຍທີ່ອະວັຍວະເພດ. ໂຣກຕິດຕໍ່ທາງເພດຊນິດນີ້ແພ່ຫຼາຍເຖິງຂັ້ນເປັນກັນ ນຶ່ງ ໃນແຕ່ລະຫ້າຄົນທີ່ມີຄວາມສຳພັນທາງເພດໃນປະເທດອອສເຕຣເລັຍ. ແຕ່ວ່າຄົນທີ່ເປັນສ່ວນຫຼາຍບໍ່ຮູ້ວ່າຕົນເປັນໂຣກດັ່ງກ່າວກໍເລີຍແພ່ຜາຍພຍາດໃຫ້ຄົນອື່ນຢ່າງບໍ່ຕັ້ງໃຈ.

<u>ໂຣກຕຸ່ມເປື່ອຍເຮີປີສແມ່ນຫຍັງ</u>? ມັນແມ່ນເຊື້ອໄວຣັສທີ່ແພ່ຫຼາຍຊນິດນຶ່ງຊຶ່ງສາມາດເຮັດໃຫ້ເກີດອາການເຈັບທີ່ອະວັຍວະເພດໄດ້, ແລະ ກໍມີອາການຢ່າງອື່ນນຳເຊັ່ນອາການຄັນປວດແສບແລະຮູ້ສຶກຢູ່ບໍ່ສະບາຍ. ອາການເຈັບແລະອາການຢ່າງອື່ນມັກຈະສະແດງອອກພາຍໃນ 10 ຫຼື 20 ວັນຫຼັງ ຈາກຕິດເຊື້ອ - ແຕ່ກໍບໍ່ແນ່ສເມີໄປ. ບາງທີ ກໍອາດໃຊ້ເວລາຫຼາຍເດືອນຫຼືຫຼາຍປີຈຶ່ງສະແດງ ອາການ ຫຼັງຈາກຕິດ ເຊື້ອໄວຣັສແລ້ວ. ສະນັ້ນຈຶ່ງອາດສາມາດກໍ່ໃຫ້ເກີດບັນຫາໃນຄວາມສຳພັນໄດ້. ລອງວາດພາບເບິ່ງວ່າຖ້າ ຄົນ ຜູ້ນຶ່ງຕິດເຊື້ອນີ້ມາໄດ້ຫຼາຍປີແລ້ວຈາກຄວາມສຳພັນຄັ້ງກ່ອນແລະໂຣກຕຸ່ມ ເປື່ອຍເຮີປີສຫາກໍ່ມາອອກຣິດເມື່ອລາວມີຄວາມສຳພັນກັບແຟນຄົນໃໝ່. ແຟນໃໝ່ອາດເຂົ້າໃຈຜິດຄິດວ່າ ລາວຕິດໂຣກເຮີປີສຍ້ອນນອກໃຈຕົນ.

<u>ເຮົາຕິດໂຣກຕຸ່ມເປື່ອຍເຮີປີສໄດ້ຢ່າງໃດ</u>? ໂດຍການມີຄວາມສຳພັນທາງເພດກັບຄົນທີ່ມີເຊື້ອໄວຣັສເຮີປີສຢູ່ໃນໄຕຊຶ່ງອາດເປັນສາເຫດໃຫ້ເກີດຕຸ່ມເປື່ອຍທີ່ອະວັຍວະເພດແລະສົບເປື່ອຍ. ເຮົາສາມາດຕິດໂຣກເຮີປີສທີ່ອະວັຍວະເພດໄດ້ໂດຍການມີເພດສຳພັນກັບຄົນທີ່ມີໂຣກນີ້ຢູ່ໃນໄຕ, ຫຼືໂດຍການຮ່ວມເພດທາງປາກກັບຄົນທີ່ເປັນສົບເປື່ອຍ. ຢ່າງໃດກໍດີ ທ່ານກໍບໍ່ສາມາດບອກໄດ້ສເມີໄປວ່າໃຜແດ່ເປັນໂຣກເຮີປີສ - ເພາະວ່າເປັນໄປໄດ້ເຊັ່ນດຽວກັນທີ່ຄົນຊຶ່ງຕິດເຊື້ອນີ້ ບໍ່ສະແດງອາການຕຸ່ມເປື່ອຍຜຸພອງ.

<u>ໂຣກຕຸ່ມເປື່ອຍເຮີປີສມີຜົນສະທ້ອນຕໍ່ສຸຂພາບຢ່າງໃດ</u> ໂຣກເຮີປີສບໍ່ແມ່ນໂຣກຮ້າຍແຮງເຖິງຊີວິດ, ແລະບໍ່ມີຜົນກະທົບຕໍ່ການມີລູກສືບພັນແຕ່ຢ່າງໃດ. ຜົນສະທ້ອນດ້ານສຸຂພາບກໍແຕກຕ່າງກັນໄປໃນແຕ່ລະຄົນ. ສຳລັບບາງຄົນຕຸ່ມເປື່ອຍອາດມີການອັກເສບພຽງເລັກນ້ອຍຊຶ່ງເກີດຂຶ້ນສອງສາມຄັ້ງຕໍ່ປີ ເຮັດໃຫ້ມີອາການແສບແລະຄັນ ບາງຄົນອາດເກີດອາການນ້ອຍເທື່ອກວ່ານັ້ນອີກ. ແຕ່ວ່າບາງຄົນອາດເກີດອາການເລື້ອຍໆຊຶ່ງເຮັດໃຫ້ຮູ້ສຶກບໍ່ສະບາຍແລະເປັນຕຸ່ມເປື່ອຍທີ່ເຈັບຫຼາຍ.

<u>ຈະປ້ອງກັນໂຣກຕຸ່ມເປື່ອຍເຮີປີສໄດ້ຢ່າງໃດ</u>? ການໃຊ້ຖົງອະນາມັຍສາມາດຊ່ວຍໄດ້ ແຕ່ບໍ່ສາມາດປ້ອງກັນເຕັມສ່ວນ. ທັງນີ້ ກໍຍ້ອນວ່າໂຣກຕຸ່ມເປື່ອຍເຮີປີສ ສາມາດຕິດຕໍ່ກັນໄດ້, ບໍ່ແມ່ນແຕ່ທາງອະວັຍວະເພດເທົ່ານັ້ນ, ແຕ່ວ່າຈາກກົ້ນແລະກົກຂາໄດ້ເຊັ່ນກັນ. ນອກຈາກນີ້ ເຮົາອາດປ້ອງກັນໄດ້ອີກທາງນຶ່ງໂດຍການລະເວັ້ນບໍ່ຮ່ວມເພດເມື່ອເຫັນການກຳເຣີບຂອງໂຣກເຊັ່ນ ມີອາການແສບ, ຄັນຫຼືເປັນຕຸ່ມຜຸພອງ. ແຕ່ວ່າຍ້ອນວ່າບາງຄົນທີ່ຕິດເຊື້ອບາງເທື່ອກໍບໍ່ມີອາການຫຍັງສະແດງໃຫ້ເຫັນ, ຈຶ່ງເປັນໄປໄດ້ທີ່ຈະຕິດເຊື້ອໄວຣັສຈາກຄົນທີ່ບໍ່ຮູ້ດ້ວຍຊ້ຳວ່າເຂົາມີເຊື້ອໂຣກນີ້.

<u>ໂຣກຕຸ່ມເປື່ອຍເຮີປີສສາມາດປົວໃຫ້ຫາຍຂາດໄດ້ບໍ</u>? ບັນຫາກ່ຽວກັບເຊື້ອໄວຣັສຊນິດນີ້ມີຢູ່ວ່າ ຖ້າຫາກຄົນຜູ້ນຶ່ງຕິດເຊື້ອນີ້ແລ້ວມັນກໍຈະຕິດຢູ່ກັບລາວ